ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມ ວຽກງານບັນຊີ ແລະ ການເງິນ ທຫລ ປີ 2021






ກອງປະຊຸມວຽກງານບັນຊີ ແລະ ການເງິນ ທະນາຄານແຫ່ງ ສປປ ລາວ ປີ 2021 ໄດ້ຈັດຂຶ້ນຢູ່ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັປະທານ ຂອງທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ການເຂົ້າຮ່ວມຂອງຄະນະນຳຈາກສາຂາ ທຫລ ປະຈຳພາກ, ຕາງໜ້າຈາກບັນດາກົມ, ທຽບເທົ່າກົມ ແລະ ພະນັກງານກົມບັນຊີແລະການເງິນ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມ 60 ກວ່າຄົນ.

ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ໄດ້ໃຫ້ຮູ້ວ່າ:ໃນໄລຍະຜ່ານມາທະນາຄານແຫ່ງ ສປປ ລາວໂດຍການເປັນເຈົ້າການຂອງກົມບັນຊີແລະການເງິນ ໄດ້ຈັດກອງປະຊຸມວຽກງານບັນຊີແລະການເງິນ ຈຳນວນ 2 ຄັ້ງ ແລະ ຄັ້ງນີ້ເປັນເທື່ອທີ 3 ເຊິ່ງຈັດຂຶ້ນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດພວມອອກແຮງແຂ່ງຂັນກັນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX (2021-2025) ເວົ້າລວມ, ເວົ້າສະເພາະແມ່ນຂະແໜງການທະນາຄານກໍພວມເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ອົງຄະນະພັກຄັ້ງທີ IV ເປັນປີທຳອິດ. ກອງປະຊຸມວຽກງານບັນຊີແລະການເງິນຂອງ ທຫລ ທີ່ຈັດ ຂຶ້ນໃນນີ້ມີຄວາມໝາຍສຳຄັນເພື່ອເປັນການທົບທວນຕີລາຄາສະພາບການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ແລກປ່ຽນຄຳຄິດເຫັນລະຫວ່າງຜູ້ຄຸ້ມຄອງ, ກວດກາ ແລະ ເພື່ອຄົ້ນຄວ້າແນວທາງແກ້ໄຂບັນດາຈຸດອ່ອນຂໍ້ຄົງຄ້າງຜ່ານມາໃຫ້ຂາດຕົວ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານບັນຊີ ແລະ ການເງິນຂອງ ທຫລ.




ກອງປະຊຸມຄັ້ງນີ້ປະກອບມີຫຼາກຫຼາຍເນື້ອໃນທີ່ສໍາຄັນໄດ້ແກ່: ສະຫຼຸບຫຍໍ້ກ່ຽວກັບການເຄື່ອນໄຫວວຽກງານບັນຊີ ແລະ ການເງິນຂອງ ທຫລ ໃນໄລຍະ 5 ປີຜ່ານມາ (2016-2020) ແລະ ທິດທາງແຜນການໃນ 5 ປີ ຕໍ່ໜ້າ, ການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນ ທຫລ. ການແກ້ໄຂຂໍ້ຄົງຄ້າງວຽກງານບັນຊີແລະການເງິນຢູ່ກົມບໍລິການ, ການກວດກາວຽກງານບັນຊີແລະການເງິນຂອງ ທຫລ, ການປະກອບຄໍາເຫັນຂອງບັນດາຫົວໜ່ວຍງົບປະມານ-ບັນຊີ ແລະ ປຶກສາຫາລືການກະກຽມຈັດກອງປະຊຸມວຽກງານບັນຊີແລະການເງິນຂອງ ທຫລ ຄັ້ງຕໍ່ໄປ.

ກອງປະຊຸມວຽກງານບັນຊີແລະການເງິນຂອງທະນາຄານແຫ່ງ ສປປ ລາວ ປີ 2021ໄດ້ດໍາເນີນເປັນເວລາ 1 ວັນ ເຊິ່ງເຕັມໄປດ້ວຍບັນຍາກາດຟົດຟື້ນ ແລະ ມີຄວາມຮັບຜິດຊອບສູງຂອງນັກວິທະຍາກອນ, ຄະນະຮັບຜິດຊອບຈັດກອງປະຊຸມ ແລະ ບັນດາທ່ານນັກສໍາມະນາກອນຈາກກົມກອງກ່ຽວຂ້ອງ ແລະ ສາຂາ ທຫລ ທີ່ໄດ້ເປັນເຈົ້າການເຂົ້າຮ່ວມຢ່າງສຸດກົກສຸດປາຍ, ປະກອບຄໍາເຫັນແລກປ່ຽນບົດຮຽນຕໍ່ວຽກງານບັນຊີ ແລະ ການເງິນຢ່າງຕັ້ງໜ້າ ແລະ ກົງໄປກົງມາ ຈົນເຮັດໃຫ້ກອງປະຊຸມສາມາດປິດລົງດ້ວຍຜົນສໍາເລັດຕາມລະດັບຄາດໝາຍ.

**#ຂ່າວ ແລະ ພາບໂດຍ: ນາງ ປາໄນ ພັນທະລາ**

ເສດຖະກິດຈະເຂັ້ມແຂງຖ້າປວງຊົນຮ່ວມແຮງ ນໍາໃຊ້ເງິນກີບ